**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ............/ລບ

ນະຄອນຫລວງວຽງຈັນ, ວັນທີ.................

# (ຮ່າງ) ດຳລັດ
# ວ່າດ້ວຍບຸນປະເພນີ, ພິທີກຳ ແລະ ງານສັງສັນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ........../ຖວທ, ລົງວັນທີ......

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດ ສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ເພື່ອເຮັດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ ປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ທີ່ເຄີຍປະຕິບັດສືບທອດກັນມາ ຮັບປະກັນລັກສະນະ ຊາດ, ມະຫາຊົນ ແລະ ກ້າວໜ້າ, ສົ່ງເສີມການດຳລົງຊີວິດແບບປະຢັດມັດທະຍັດ, ສະກັດກັ້ນຄ່ານິຍົມແບບຟູມເຟືອຍ, ເພີ່ມທະວີຄວາມສາມັກຄີ ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ, ເປັນລະບຽບຮຽບຮ້ອຍ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ໝັ້ນຄົງ.

**ມາດຕາ 2 ບຸນປະເພນີ, ພິທີກຳ ແລະ ງານສັງສັນ**

ບຸນປະເພນີ ແມ່ນ ງານບຸນ ຫຼື ກິດຈະກຳທີ່ສ້າງຂຶ້ນ ແລະ ປະຕິບັດສືບເນື່ອງກັນມາຢ່າງເປັນປົກກະຕິຈົນກາຍເປັນແບບແຜນການດຳລົງຊີວິດທີ່ຕິດພັນກັບແນວຄິດ, ການກະທຳ ຫຼື ພຶດຕິກຳ ໃນການປະຕິບັດທາງສາສະໜາ ຫຼື ປະເພນີທາງສັງຄົມທີ່ເປັນອະລິຍະທຳທາງດ້ານຈິດໃຈ ເພື່ອອະນຸລັກຮັກສາ ແລະ ສົ່ງເສີມປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າ ທັງເປັນການເຕົ້າໂຮມຄວາມສາມັກຄີ ແລະ ສ້າງຄວາມເບີກບານມ່ວນຊື່ນ.

ພິທີກຳ ແມ່ນ ຮູບແບບການປະພຶດ, ການກະທຳ ຫຼື ພຶດຕິກຳ ລວມທັງວັດຖຸ ແລະ ຈິດໃຈ ບົນພື້ນຖານຄວາມເຊື່ອ, ຄວາມສັດທາ ຕິດພັນກັບວິຖີການດຳລົງຊີວິດ ຈາກຮຸ່ນສູ່ຮຸ່ນ.

ງານສັງສັນ ແມ່ນ ກິດຈະກຳພົບປະທີ່ເປັນທາງການ ແລະ ບໍ່ເປັນທາງການ ເພື່ອສະຫຼອງ ຫຼື ຊົມເຊີຍ ເຫດການ, ບຸກຄົນ ໃດໜຶ່ງ, ສະແດງຄວາມຊົມຊື່ນຍິນດີ, ສ້າງຄວາມສາມັກຄີ ຮັກແພງ ແລະ ອອຍພອນ ຊຶ່ງກັນ ແລະ ກັນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຮີດ ໝາຍເຖິງ ທຳນຽມ ປະເພນີ ແບບແຜນ ກິດປະພຶດປະຕິບັດອັນຈີບງາມ ທີ່ໄດ້ຮັບການສືບທອດ ກັນມາຫຼາຍຮຸ່ນຄົນ ເປັນຕົ້ນ ຮີດ 12;
2. ຄອງ ໝາຍເຖິງ ທຳນຽມປະຕິບັດສືບທອດກັນມາ ຈົນເປັນແບບແຜນວິທີການທີ່ຕ້ອງປະຕິບັດກັນໃນສັງຄົມ ເປັນຕົ້ນ ຄອງ 14;
3. ປະເພນີ ໝາຍເຖິງ ສິ່ງທີ່ຄົນທັງຫຼາຍປະຕິບັດກັນມາ ຈົນເຄີຍ ຫຼື ນິຍົມກັນເປັນຄວາມຊິນເຄີຍ ແລະ ກາຍເປັນແບບແຜນໃຫ້ເຮັດຢ່າງເປັນປະຈຳ ໃນລະດູການ ຫຼື ໃນປີ ເປັນຕົ້ນ ປະເພນີສູ່ຂວັນ, ຊ່ວງເຮືອ, ບັ້ງໄຟ;
4. ຂະໜົບ ໝາຍເຖິງ ແບບຢ່າງ, ແບບແຜນ, ລະບຽບ ທີ່ໄດ້ປະຕິບັດສືບທອດກັນມາ ເປັນຕົ້ນ ການຍົກມືໄຫວ້ ທັກທາຍ ສະບາຍດີກັນ, ການໃຫ້ຄວາມເຄົາລົບຜູ້ອາວຸໂສ, ການມີມາລະຍາດໃນສັງຄົມ;
5. ທຳນຽມ ໝາຍເຖິງ ແບບແຜນທີ່ປະຕິບັດກັນເປັນປົກກະຕິໃນກຸ່ມຄົນໃດໜຶ່ງ ຈົນກາຍເປັນຮີດຄອງປະເພນີ ເປັນຕົ້ນ ການໄປມາຫາສູ່ກັນ, ;
6. ຄວາມເຊື່ອ ໝາຍເຖິງ ຄວາມເຫັນຕາມ, ຄວາມໄວ້ໃຈ, ຄວາມນັບຖື, ການຍອມຮັບພາຍໃຕ້ຈິດສຳນຶກຂອງມະນຸດຕໍ່ພະລັງອຳນາດເໜືອທຳມະຊາດ ທີ່ເປັນຜົນດີ ຫຼື ຜົນຮ້າຍຕໍ່ມະນຸດ;
7. ຄວາມສັດທາ ໝາຍເຖິງ ຄວາມເຊື່ອ ແລະ ຄວາມເຫຼື້ອມໃສທີ່ປະກອບດ້ວຍເຫດຜົນ, ປັນຍາ ແລະ ສິ່ງທີ່ຖືກຕ້ອງດີງາມ;
8. ການເຊື່ອຖືແບບງົມງວາຍ ໝາຍເຖິງ ການເຊື່ອຖື ບໍ່ມີເຫດຜົນ, ບໍ່ຍອມຮັບຟັງເຫດຜົນຄົນອື່ນ, ບໍ່ມີລັກສະນະກ້າວໜ້າ, ຫຼ້າຫຼັງ ແລະ ກີດໜ່ວງຖ່ວງດຶງການພັດທະນາ;
9. ການຟູມເຟືອຍ ໝາຍເຖິງ ການຈັດງານຕ່າງໆ ທີ່ມີການມ່ວນຊື່ນ, ເຮັດຂຶ້ນແບບໃຫຍ່ໂຕ ຊຶ່ງມີການໃຊ້ຈ່າຍຢ່າງຫຼວງຫຼາຍ ເກີນຂອບເຂດທີ່ຄວນປະຕິບັດ;
10. ການປະຢັດ ມັດທະຍັດ ໝາຍເຖິງ ການຈັດງານຕ່າງໆ ທີ່ເຮັດຂຶ້ນແບບງ່າຍດາຍ, ກະທັດຮັດ, ບໍ່ໃຊ້ເວລາຍາວ ຊຶ່ງມີການໃຊ້ຈ່າຍ ບໍ່ຫຼາຍເກີນຄວາມຈຳເປັນ ແຕ່ໄດ້ຮັບຜົນສຳເລັດຢ່າງຈີບງາມ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ**

ລັດ ກຳນົດເອົາວັດທະນະທຳ ເປັນປັດໄຈພື້ນຖານແຫ່ງການດຳລົງຄົງຕົວຂອງຊາດ, ສ້າງວັດທະນະທຳ ທີ່ມີລັກສະນະ ຊາດ, ມະຫາຊົນ ແລະ ກ້າວໜ້າ, ເປັນກຳລັງຍູ້ດັນຂອງການພັດທະນາ ເສດຖະກິດ-ສັງຄົມ, ເສີມຂະຫຍາຍອະຣິຍະທຳທາງດ້ານຈິດໃຈ ໃຫ້ມີຄວາມສີວິໄລ, ສົ່ງເສີມຄ່ານິຍົມ ທີ່ຖືກຕ້ອງ, ຮັບເອົາສິ່ງຍອດຍິ່ງຂອງຍຸກສະໄໝ ໂດຍມີການເລືອກເຟັ້ນ, ຕີຖອຍ, ຕ້ານ ແລະ ສະກັດກັ້ນ ກົນອຸບາຍ, ກະແສວັດທະນະທຳທີ່ເປັນພິດໄພ, ເສື່ອມຊາມ ແລະ ການເຊື່ອຖືແບບງົມງວາຍ.

ລັດ ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ອະນຸລັກຮັກສາ, ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ໃຫ້ມີຄວາມຍືນຍົງ, ສ້າງຄວາມສາມັກຄີປອງດອງ ຮັກສາຄວາມຄວາມສະຫງົບສຸກ ແລະ ເປັນລະບຽບຮຽບຮ້ອຍໃນສັງຄົມ ພ້ອມທັງປະກອບສ່ວນເຂົ້າໃນການປະຢັດ ມັດທະຍັດ ແລະ ສະກັດກັ້ນການຟູມເຟືອຍ.

ລັດ ສົ່ງເສີມຄຸນຄ່າການປະດິດສ້າງ, ພູມປັນຍາທ້ອງຖິ່ນ, ມໍຣະດົກທາງດ້ານວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ ດ້ວຍການສະໜັບສະໜູນການຈັດງານກິດຈະກໍາວັດທະນະທໍາປະເພດຕ່າງໆ ເພື່ອເຜີຍແຜ່ທົ່ວສັງຄົມ ໄດ້ຮັບຮູ້ຢ່າງກວ້າງຂວາງ.

**ມາດຕາ 5 ຫຼັກການກ່ຽວກັບ ບຸນປະເພນີ, ພິທີກໍາ ແລະ ງານສັງສັນ**

ການເຄື່ອນໄຫວປະຕິບັດ ບຸນປະເພນີ, ພິທີກໍາ ແລະ ງານສັງສັນ ໃຫ້ດໍາເນີນຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາວຽກງານວັດທະນະທໍາໃນແຕ່ລະໄລຍະ;
2. ຮັບປະກັນການປົກປ້ອງສິດ, ເນື້ອໃນ, ຮູບການ, ວິທີການຈັດຕັ້ງປະຕິບັດ ໃຫ້ມີຄວາມສະຫງົບປອດໄພ ເປັນລະບຽບຮຽບຮ້ອຍໃຫ້ສັງຄົມມີຄວາມສາມັກຄີປອງດອງຢ່າງກວ້າງຂວາງ, ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ;
3. ຮັກສາມູນເຊື້ອປະຫວັດສາດ, ຮີດຄອງປະເພນີ ແລະ ວັດທະນະທໍາອັນດີງາມຂອງຊາດ ຂອງເຜົ່າ ພ້ອມທັງປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທໍາມະຊາດໃຫ້ມີຄວາມຍືນຍົງ;
4. ຈໍາກັດ ແລະ ຕີຖອຍແນວຄິດທີ່ຝືນວິທະຍາສາດ, ລົບລ້າງຮ່ອງຮອຍການເຊື່ອຖືແບບງົມງວາຍ, ສວຍໃຊ້ຮີດຄອງປະເພນີ ເປັນເງື່ອນໄຂຫາລາຍໄດ້ ແລະ ຕ້ານປາກົດການຫຍໍ້ທໍ້ຕ່າງໆ ທີ່ກີດໜ່ວງຖ່ວງດຶງການພັດທະນາ;
5. ຍົກສູງສະຕິ, ຄວາມເປັນເຈົ້າການ, ຄ່ານິຍົມທີ່ຖືກຕ້ອງ ແລະ ສອດຄ່ອງ, ປະຕິບັດການປະຢັດມັດທະຍັດ ແລະ ຕ້ານການຟູມເຟືອຍ, ຫຼີກລ່ຽງການຮັບເອົາວັດທະນະທໍາຈາກພາຍນອກໂດຍບໍ່ມີການເລືອກເຟັ້ນ.

**ມາດຕາ 6 ພັນທະຕໍ່ ບຸນປະເພນີ, ພິທີກໍາ ແລະ ງານສັງສັນ**

ພົນລະເມືອງທຸກຄົນ ທີ່ອາໄສຢູ່ ສປປ ລາວ ມີພັນທະ ໃນການອະນຸລັກ, ປົກປັກຮັກສາ, ສົ່ງເສີມ ແລະ ເຜີຍແຜ່ ວັດທະນະທໍາ, ຮີດຄອງປະເພນີທີ່ເປັນມູນເຊື້ອອັນດີງາມ ຂອງຊາດ, ຂອງເຜົ່າ ປະກອບສ່ວນຮັກສາຄວາມສະຫງົບສຸກ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ຕ້ານ, ສະກັດກັ້ນ ແລະ ແກ້ໄຂປາກົດການຫຍໍ້ທໍ້ ກ່ຽວກັບ ບຸນປະເພນີ, ພິທີກໍາ ແລະ ງານສັງສັນ ໃນສັງຄົມ.

**ມາດຕາ 7 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນກັບ ບຸນປະເພນີ, ພິທີກໍາ ແລະ ງານສັງສັນ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ກ່ຽວກັບ ບຸນປະເພນີ, ພິທີກໍາ ແລະ ງານສັງສັນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ແລະ ການຊ່ວຍເຫຼືອດ້ານຕ່າງໆ ບົນພື້ນຖານການເຄົາລົບກົດໝາຍ ແລະ ຮີດຄອງປະເພນີຂອງກັນ ແລະ ກັນ, ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ໝວດທີ 2
### ລະດັບ, ການຈັດ, ການຂໍອະນຸຍາດ ແລະ ພິຈາລະນາ ບຸນປະເພນີ

**ມາດຕາ 9 ລະດັບບຸນປະເພນີ**

ບຸນປະເພນີ ມີ ສອງລະດັບ ດັ່ງນີ້:

1. ບຸນປະເພນີ ລະດັບຊາດ;
2. ບຸນປະເພນີ ລະດັບທ້ອງຖິ່ນ.

**ມາດຕາ 10 ບຸນປະເພນີ ລະດັບຊາດ**

ບຸນປະເພນີ ລະດັບຊາດ ແມ່ນ ປາງບຸນໃຫຍ່ທີ່ຈັດຂຶ້ນໃນຂອບເຂດທົ່ວປະເທດ ໂດຍປະຊາຊົນລາວບັນດາເຜົ່າປະຕິບັດສືບທອດກັນມາແຕ່ບູຮານນະການຈົນເຖິງປັດຈຸບັນ ເພື່ອໃຫ້ເປັນມູງຄຸນແກ່ຊີວິດ, ສຳນຶກໃນບຸນຄຸນບັນພະບຸລຸດ ທັງເປັນການເຕົ້າໂຮມຄວາມສາມັກຄີ ແລະ ເບີກບານມ່ວນຊື່ນ ເຊັ່ນ ບຸນປີໃໝ່ລາວ, ບຸນນະມັດສະການພຣະທາດຫຼວງວຽງຈັນ, ບຸນວິສາຂະບູຊາ, ບຸນເຂົ້າພັນສາ, ບຸນອອກພັນສາ, ບຸນຫໍ່ເຂົ້າປະດັບດິນ, ບຸນພະເວດ.

**ມາດຕາ 11 ບຸນປະເພນີ ລະດັບທ້ອງຖິ່ນ**

ບຸນປະເພນີ ລະດັບທ້ອງຖິ່ນ ແມ່ນ ບຸນປະເພນີທີ່ເປັນເອກະລັກສະເພາະທ້ອງຖິ່ນ ແລະ ເຜົ່າໃດໜຶ່ງຊຶ່ງຈັດຂຶ້ນ ໃນລະດັບ ແຂວງ, ເມືອງ, ບ້ານ ຕາມຮອບວຽນຂອງຮີດຄອງປະເພນີທີ່ເຄີຍສືບທອດກັນມາ ແຕ່ບູຮານນະການ ຈົນເຖິງປັດຈຸບັນ ເພື່ອເຕົ້າໂຮມຄວາມສາມັກຄີ ແລະ ເບີກບານມ່ວນຊື່ນ ທັງເປັນການສະຫຼອງ ຫຼື ຊົມເຊີຍຜົນຜະລິດ, ສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ ເປັນຕົ້ນ ບຸນນະມັດສະການຜາສາດຫີນວັດພູ , ບຸນນະມັດສະການພຣະທາດອີງຮັງ, ບຸນນະມັດສະການພຣະທາດສີໂຄດຕະບອງ, ເທສະການບຸນຊ້າງ, ບຸນກອງເຂົ້າໃຫຍ່, ບຸນກິນຈຽງ ຫຼື ບຸນນໍ່ເປ່ເຈົ່າ ຂອງຊົນເຜົ່າມົ້ງ, ບຸນໂອ້ນຊາ ຫຼື ຊີງຊາ ຂອງຊົນເຜົ່າອາຄາ, ບຸນເກຣິທ ຂອງຊົນເຜົ່າກຶມມຸ, ການລະຫຼິ້ນພື້ນເມືອງ ແລະ ບຸນຊົນເຜົ່າອື່ນ.

**ມາດຕາ 12 ການຈັດບຸນປະເພນີ**

ການຈັດບຸນປະເພນີ ໃຫ້ຄວາມສຳຄັນ ແລະ ມີມາດຕະການ ດັ່ງນີ້:

1. ບຸນປະເພນີ ຈັດຂຶ້ນຕາມຮອບວຽນຂອງແຕ່ລະເດືອນພາຍໃນໜຶ່ງປີ ທີ່ກຳນົດໃຫ້ເປັນຮີດ 12 ຕາມປະຕິທິນ ແລະ ຕາມປະເພນີນິຍົມຂອງແຕ່ລະຊາດ, ແຕ່ລະທ້ອງຖິ່ນ ແລະ ແຕ່ລະຊົນເຜົ່າ;
2. ການຈັດບຸນປະເພນີ ມີຂຶ້ນເພື່ອສືບທອດມູນເຊື້ອຮັກຊາດ, ຄວາມເອກອ້າງທະນົງໃຈຂອງຊາດ, ສົ່ງເສີມວັດທະນະທຳ ແລະ ຮັກສາໄດ້ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ແລະ ປະເພນີດັ້ງເດີມຂອງງານບຸນ, ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ທາງດ້ານ ວັດຖຸ ແລະ ຈິດໃຈ, ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ;
3. ການຈັດບຸນປະເພນີ ຮັບປະກັນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ລຽບງ່າຍ, ກະທັດຮັດ, ປະຢັດມັດທະຍັດ ແລະ ສະກັດກັ້ນການຟູມເຟືອຍ, ຫຼຸດຜ່ອນໄລຍະເວລາ ແຕ່ໃຫ້ເຕັມໄປດ້ວຍເນື້ອໃນຄວາມໝາຍ ແລະ ຄວາມສຳຄັນຂອງງານບຸນ;
4. ການຈັດບຸນປະເພນີ ຕ້ອງມີລັກສະນະ ຊຸກຍູ້, ສົ່ງເສີມສີມືແຮງງານໃນການຜະລິດ ແລະ ສະໜອງເຄື່ອງຫັດຖະກຳພື້ນບ້ານ, ອາຫານພື້ນເມືອງ, ຜະລິດຕະພັນວັດທະນະທຳ;

5. ການຈັດບຸນປະເພນີ ຢູ່ໃນສາສະນະສະຖານ ຖ້າຫາກມີການເສບງັນ ຕ້ອງເປີດປິດສູດຫຼັກທຳຄຳສັ່ງສອນຂອງສາສະໜາ ແລະ ບົດເທສະໜາຕ່າງໆ ຫຼື ເປີດສຽງຂັບ ລຳທ້ອງຖິ່ນ, ສຽງເສບດົນຕີພື້ນເມືອງ, ສຽງເພງລາວ ທີ່ມີລັກສະນະສ້າງສັນ;
6. ການຈັດບຸນປະເພນີ ໃຫ້ນຳໃຊ້ມາດຕະການຮັກສາຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສອດຄ່ອງກັບກົດໝາຍ ຂອງ ສປປ ລາວ, ການປ້ອງກັນອັກຄີໄພ ແລະ ລະເບີດແຕກ, ຄວາມປອດໄພທາງດ້ານການຈະລາຈອນ, ມາດຕະການທາງດ້ານສຸຂານາໄມ ແລະ ສິ່ງແວດລ້ອມ ແນໃສ່ປົກປັກຮັກສາພູມມີທັດ ແລະ ສະຖານທີ່ຈັດງານ;
7. ການນຸ່ງຖືໃນງານບຸນ ໃຫ້ສຸພາບຮຽບຮ້ອຍ, ຈົບງາມ ເໝາະສົມຕາມກາລະເທສະຂອງງານ ແລະ ຮີດຄອງປະເພນີຂອງຊາດ ແລະ ຂອງເຜົ່າ.

**ມາດຕາ 13 ການຂໍອະນຸຍາດຈັດ ບຸນປະເພນີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ຈັດບຸນປະເພນີແຕ່ລະລະດັບ ນອກຈາກບຸນປະເພນີ ຮີດ 12 ຕ້ອງຍື່ນຄຳຮ້ອງ ພ້ອມທັງເອກະສານປະກອບຢ່າງຄົບຖ້ວນ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດັ່ງນີ້:

**1. ຂັ້ນຕອນ**

1.1. ປະກອບເອກະສານຄົບຊຸດ ແລະ ຍື່ນຂໍອະນຸຍາດຈັດບຸນປະເພນີລະດັບຊາດ ຕໍ່ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງໜ້ອຍສາມສິບວັນ ກ່ອນວັນຈັດງານ;

1.2. ປະກອບເອກະສານຄົບຊຸດ ແລະ ຍື່ນຂໍອະນຸຍາດຈັດບຸນປະເພນີລະດັບທ້ອງຖິ່ນ ຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ຢ່າງໜ້ອຍ ສາມສິບວັນ ກ່ອນວັນຈັດງານ;

1.3. ປະກອບເອກະສານຄົບຊຸດ ແລະ ຍື່ນສະເໜີຜ່ານສະຖານທູດ, ກົງສຸນ ຫຼື ກົງສຸນໃຫຍ່ຂອງປະເທດຕົນ ແລ້ວນຳສົ່ງເຖິງກະຊວງການຕ່າງປະເທດ ເພື່ອຂໍອະນຸຍາດຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ, ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງໜ້ອຍ ສາມສິບວັນ ກ່ອນວັນຈັດງານ.

**2. ການປະກອບຄຳຮ້ອງຂໍອະນຸຍາດຈັດບຸນປະເພນີ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຈັດບຸນປະເພນີ ຕ້ອງປະກອບ ຄຳຮ້ອງຂໍອະນຸຍາດ ແລະ ເອກະສານ ດັ່ງນີ້:

ຄຳຮ້ອງຂໍອະນຸຍາດຈັດບຸນປະເພນີ ໂດຍບອກຊື່ບຸນປະເພນີ, ຈຸດປະສົງ, ຄວາມຈຳເປັນ,

1. ຄາດໝາຍ, ເນື້ອໃນປະຫວັດຄວາມເປັນມາຂອງບຸນ, ເວລາ, ສະຖານທີ່ ແລະ ຄາດຄະເນຈຳນວນຜູ້ເຂົ້າຮ່ວມ 1 ສະບັບ;
2. ແຜນງານ ແລະ ແຜນການເຄື່ອນໄຫວ ກິດຈະກຳຂອງບຸນປະເພນີ 1 ສະບັບ;
3. ໃບຢັ້ງຢືນທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຈັດງານ 1 ສະບັບ;
4. ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນ (ຖ້າມີ) 1 ສະບັບ;
5. ໃບຢັ້ງຢືນການເສຍອາກອນປະຈຳປີຫຼ້າສຸດ (ຖ້າມີ) 1 ສະບັບ;
6. ຮູບຖ່າຍ 3x4 ຊມ 2 ໃບ;

7. ໃບຢັ້ງຢືນສະຖານທີ່ຈັດບຸນປະເພນີ 1 ສະບັບ;

8. ແຜນການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ 1 ສະບັບ;

9. ແຜນການປົກປັກຮັກສາສິ່ງແວດລ້ອມ ແລະ ສຸຂານາໄມ 1 ສະບັບ.

**ມາດຕາ 14 ການພິຈາລະນາອອກອະນຸຍາດ ຈັດບຸນປະເພນີ**

ພາຍຫຼັງ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບແລ້ວ ຕ້ອງປະເມີນ, ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານໂດຍທັນທີ, ດຳເນີນການຄົ້ນຄວ້າ ແລະ ພິຈາລະນາອອກອະນຸຍາດຈັດບຸນປະເພນີໃຫ້ພາກສ່ວນທີ່ສະເໜີ ຕາມຂັ້ນຕອນ ພາຍໃນເວລາ ເຈັດ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ. ໃນກໍລະນີເອກະສານບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງດຳລັດສະບັບນີ້ ກໍຕ້ອງແຈ້ງໃຫ້ພາກສ່ວນທີ່ສະເໜີ ເປັນລາຍລັກອັກສອນ ເພື່ອປັບປຸງ ແລະ ປະກອບເພີ່ມຕື່ມ. ພາກສ່ວນທີ່ສະເໜີ ຕ້ອງໄດ້ປັບປຸງ ແລະ ປະກອບເອກະສານເພີ່ມຕື່ມ ຕາມທີ່ໄດ້ກຳນົດໄວ້. ໃນກໍລະນີບໍ່ເຫັນດີໃຫ້ອະນຸຍາດຈັດບຸນປະເພນີ ກໍຕ້ອງມີການຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຊັດເຈນ.

ບຸນປະເພນີ ສາມາດຈັດຂຶ້ນໄດ້ພາຍຫຼັງໄດ້ຮັບການອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ.

## ໝວດທີ 3
### ບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ

**ມາດຕາ 15 ບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ**

ບຸນປະເພນີ ຂອງຊາວຕ່າງດ້າວ, ຊາວຕ່າງປະເທດ ແມ່ນ ບຸນປະເພນີທີ່ມີຕົ້ນກຳເນີດມາຈາກຕ່າງປະເທດ ລວມເຖິງບຸນປະເພນີທາງສາສະໜາຈາກຕ່າງປະເທດ ໂດຍມີການເຄື່ອນໄຫວຈັດງານ ຂຶ້ນຢູ່ພາຍໃນ ສປປ ລາວ. ບຸນປະເພນີດັ່ງກ່າວ ມີເນື້ອໃນເຊີດຊູຄຸນຄ່າຂອງບຸນປະເພນີວັດທະນະທຳ ທີ່ເປັນເອກະລັກສະເພາະຊາວຕ່າງດ້າວ, ຊາວຕ່າງປະເທດ ໂດຍຕິດພັນກັບປະຫວັດສາດຂອງບຸນປະເພນີ ທີ່ໄດ້ສືບທອດກັນມາ.

**ມາດຕາ 16 ການຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ**

ການຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ ໃຫ້ຄວາມສຳຄັນ ແລະ ມີມາດຕະການດັ່ງນີ້:

1. ການຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ ສືບທອດມູນເຊື້ອ, ຄວາມເອກອ້າງທະນົງໃຈ, ການສົ່ງເສີມວັດທະນະທຳ ແລະ ການຮັກສາຮີດຄອງປະເພນີ ຂອງຊາວດ້າວ, ຊາວຕ່າງປະເທດ ແລະ ປະເພນີດັ້ງເດີມຂອງງານບຸນ;
2. ການຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ ຢູ່ໃນສາສະນະສະຖານ ຖ້າຫາກມີການເສບງັນ ຫຼື ການເປີດເພງ ຕ້ອງໃຫ້ມີລັກສະນະສ້າງສັນ, ເປີດ ປິດ ຕາມໂມງເວລາ ແລະ ຂອບເຂດ ທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ການຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ ຮັບປະກັນຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ບໍ່ຫວັງຜົນປະໂຫຍດຈາກງານບຸນນັ້ນ;
4. ການຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດ ໃຫ້ນໍາໃຊ້ມາດຕະການຮັກສາຄວາມສະຫງົບ, ການປ້ອງກັນອັກຄີໄພ, ການສ້າງຄວາມສະດວກໃນການສັນຈອນ, ມາດຕະການທາງດ້ານສຸຂານາໄມ ແລະ ສິ່ງແວດລ້ອມ;
5. ການນຸ່ງຖືໃນງານບຸນ ໃຫ້ສຸພາບຮຽບຮ້ອຍ, ຈົບງາມ, ເໝາະສົມຕາມກາລະເທສະຂອງງານບຸນ ແລະ ຮີດຄອງປະເພນີຂອງຕົນ.

ສໍາລັບ ການຂໍອະນຸຍາດ ແລະ ພິຈາລະນາອອກອະນຸຍາດ ຈັດບຸນປະເພນີຂອງຊາວຕ່າງດ້າວ, ຊາວຕ່າງປະເທດນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 14 ຂໍ້ 1.3 ແລະ ມາດຕາ 15 ຂອງດໍາລັດສະບັບນີ້.

## ໝວດທີ 4
### ປະເພດ, ການຈັດ, ການຂໍອະນຸຍາດ ແລະ ພິຈາລະນາ ພິທີກໍາ

**ມາດຕາ 17 ປະເພດພິທີກໍາ**

ພິທີກໍາ ມີ ຫ້າ ປະເພດ ດັ່ງນີ້:

1. ພິທີກໍາທາງສາສະໜາ;
2. ພິທີກໍາຕາມຄວາມເຊື່ອ;
3. ພິທີກໍາປະຕິບັດໃນເທສະການຕ່າງໆ;
4. ພິທີກໍາແຫ່ງວົງຈອນຊີວິດ;
5. ພິທີກໍາຕິດພັນກັບລະດູການຜະລິດ ແລະ ເກັບກ່ຽວ.

**ມາດຕາ 18 ພິທີກໍາທາງສາສະໜາ**

ພິທີກໍາທາງສາສະໜາ ແມ່ນ ແບບແຜນ, ຂະໜົບ ທໍານຽມ, ຂັ້ນຕອນ, ພິທີການ ທີ່ປະຕິບັດຕາມຫຼັກທໍາຄໍາສອນ ແລະ ກົດບັນຍັດຂອງແຕ່ລະສາສະໜາ.

**ມາດຕາ 19 ພິທີກໍາຕາມຄວາມເຊື່ອ**

ພິທີກໍາຕາມຄວາມເຊື່ອ ແມ່ນ ການຈັດພິທີບູຊາ, ກາບໄຫວ້ ຕາມຄວາມເຊື່ອ ທີ່ໃຫ້ການຍອມຮັບ ແລະ ເຊື່ອຖືສິ່ງໃດໜຶ່ງ ໂດຍມີຄວາມສໍາພັນກັບທໍາມະຊາດ ແລະ ການດໍາລົງຊີວິດຂອງມະນຸດ ທີ່ໄດ້ປະຕິບັດສືບທອດກັນມາ.

ນອກຈາກນີ້ ພິທີກໍາດັ່ງກ່າວ ຍັງມີການປະຕິບັດ ຫຼື ການກະທໍາ ຕາມຂັ້ນຕອນ ເຫດການໃດໜຶ່ງ ເປັນການຊົ່ວຄາວ ຫຼື ໃນກາລະໂອກາດໃດໜຶ່ງ ເພື່ອຮຽກເອີ້ນວິນຍານ, ບູຊາສິ່ງສັກສິດ, ຍຶດໝັ້ນທາງຈິດໃຈ, ປັດເປົ່າສິ່ງຊົ່ວຮ້າຍ ໃຫ້ເກີດຄວາມຢູ່ດີມີສຸກ ແລະ ຈະເລີນຮຸ່ງເຮືອງໃນຊີວິດ.

**ມາດຕາ 20 ພິທີກຳປະຕິບັດໃນເທສະການຕ່າງໆ**

ພິທີກຳປະຕິບັດໃນເທສະການຕ່າງໆ ແມ່ນ ການປະກອບພິທີໃດໜຶ່ງ ທີ່ຈັດຂຶ້ນໃນເທສະການຕ່າງໆ ເປັນຕົ້ນ ບຸນປະເພນີປະຈຳຊາດ, ຊົນເຜົ່າ ແລະ ສາສະໜາ ທີ່ປະຕິບັດສືບທອດກັນມາເປັນເວລາດົນນານ ກາຍເປັນຂະໜົບ ທຳນຽມ ແລະ ຮີດຄອງປະເພນີ ເພື່ອຄວາມເປັນສີຣິມຸງຄຸນ ແລະ ຄວາມຈະເລີນຮຸ່ງເຮືອງ.

ພິທີກຳ ແລະ ບຸນປະເພນີ ມີຄວາມສຳພັນກັນ ຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້.

**ມາດຕາ 21 ພິທີກຳແຫ່ງວົງຈອນຊີວິດ**

ພິທີກຳແຫ່ງວົງຈອນຊີວິດ ແມ່ນ ການຈັດພິທີໃດໜຶ່ງຂຶ້ນຕາມຮີດຄອງປະເພນີ ຊຶ່ງໃນຊີວິດມະນຸດ ຂອງແຕ່ລະຄົນ ຈະມີການປ່ຽນແປງໃນແຕ່ລະຊ່ວງເວລາຈາກສະຖານະພາບໜຶ່ງໄປເປັນສະຖານະພາບອື່ນ ເປັນຕົ້ນ ປ່ຽນໄວ, ປ່ຽນສະຖານະພາບທາງສັງຄົມ, ປ່ຽນສິ່ງແວດລ້ອມ, ເກີດ, ແກ່, ເຈັບຕາຍ ແລະ ອື່ນໆ.

**ມາດຕາ 22 ພິທີກຳຕິດພັນກັບລະດູການຜະລິດ ແລະ ເກັບກ່ຽວ**

ພິທີກຳຕິດພັນກັບລະດູການຜະລິດ ແລະ ເກັບກ່ຽວ ແມ່ນ ການຈັດພິທີບູຊາເທວະດາ, ບວງສວງສິ່ງສັກສິດໃນທຳມະຊາດ ເພື່ອຂໍນ້ຳຂໍຝົນ, ປົກປັກຮັກສາຜົນຜະລິດ, ໄຮ່ນາ, ການກະເສດ ໃຫ້ມີຄວາມອຸດົມສົມບູນ ເນື່ອງຈາກວ່າຊີວິດຄົນ ໄດ້ເພິ່ງພາອາໄສທຳມະຊາດ ເພື່ອທຳມາຫາກິນ. ນອກນັ້ນ ຍັງຈັດພິທີກຳສະຫຼອງ ຫຼື ຊົມເຊີຍຜົນຜະລິດ, ຮູ້ບຸນຄຸນ ເຂົ້າ ແລະ ເຄື່ອງມືທຳມາຫາກິນ.

**ມາດຕາ 23 ການຈັດພິທີກຳ**

ການຈັດພິທີກຳ ໃຫ້ຄວາມສຳຄັນ ແລະ ມີມາດຕະການ ດັ່ງນີ້:

1. ການຈັດພິທີກຳ ດຳເນີນໂດຍ ອົງການຈັດຕັ້ງສາສະໜາ ແລະ ສາສະນະສະຖານ ທີ່ໄດ້ລົງທະບຽນ, ຖືກຮັບຮອງ ແລະ ອະນຸຍາດຈາກກະຊວງພາຍໃນແລ້ວ;
2. ການເຄື່ອນໄຫວຈັດພິທີກຳ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຫຼັກຄຳສອນ, ຫຼັກທຳ, ທຳມະ, ເທດສະໜາ ແລະ ຄຳພີ ຂອງແຕ່ລະສະໜາ;
3. ການຈັດພິທີກຳ ຕ້ອງມີແບບແຜນ, ຂັ້ນຕອນການປະຕິບັດ, ມີຄວາມສັກສິດ ແລະ ເປັນປະເພນີ, ມີຄວາມສະຫງົບສຸກ ແລະ ເປັນລະບຽບຮຽບຮ້ອຍ;
4. ການຈັດພິທີກຳ ສະແດງເຖິງຄວາມເຄົາລົບ, ນັບຖື ຊຶ່ງກັນ ແລະ ກັນ, ມີຄວາມສາມັກຄີປອງດອງ ເປັນອັນ ໜຶ່ງອັນດຽວກັນຂອງທຸກຊັ້ນຄົນໃນສັງຄົມ;
5. ການຈັດພິທີກຳ ຕ້ອງຮັບປະກັນການອະນຸລັກ, ປົກປັກຮັກສາ, ເສີມຂະຫຍາຍຄຸນຄ່າທາງຈິດໃຈ ແລະ ສົ່ງເສີມຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ແລະ ສາສະໜາ ສອດຄ່ອງກັບແນວທາງນະໂຍບາຍທີ່ວາງອອກ;
6. ການນຸ່ງຖືໃນພິທີກຳ ຕ້ອງໃຫ້ສຸພາບຮຽບຮ້ອຍ, ຈົບງາມ, ເໝາະສົມຕາມກາລະເທສະຂອງງານ ແລະ ຮີດຄອງປະເພນີຂອງຊາດ, ຂອງເຜົ່າ;
7. ການຈັດພິທີກຳ ຕ້ອງຮັບປະກັນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ລຽບງ່າຍ, ກະທັດຮັດ, ປະຢັດມັດທະຍັດ, ຫຼຸດຜ່ອນໄລຍະເວລາ ແຕ່ໃຫ້ເຕັມໄປດ້ວຍເນື້ອໃນຄວາມໝາຍ ແລະ ຄວາມສຳຄັນຂອງງານ.

**ມາດຕາ 24 ການຂໍອະນຸຍາດຈັດພິທີກຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຈັດພິທີກຳແຕ່ລະປະເພດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ຂະແໜງການພາຍໃນ ຫຼື ຂະແໜງການ ຖະແຫຼງ

ຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມແຕ່ລະກໍລະນີ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ຄໍາຮ້ອງຂໍອະນຸຍາດ ແລະ ເອກະສານປະກອບ ຈັດພິທີກໍາ ມີ ດັ່ງນີ້:

1. ຄໍາຮ້ອງ ຫຼື ໜັງສືສະເໜີຂໍຈັດພິທີກໍາ 1 ສະບັບ;
2. ແຜນການເຄື່ອນໄຫວ ຫຼື ລາຍການຂອງພິທີກໍາ 1 ສະບັບ;
3. ຂໍ້ຕົກລົງແຕ່ງຕັ້ງຄະນະກໍາມະການຈັດພິທີກໍາ 1 ສະບັບ;
4. ໃບຢັ້ງຢືນທີ່ຕັ້ງຂອງພິທີກໍາ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ແຜນທີ່ຕັ້ງພິທີກໍາ. 1 ສະບັບ.

**ມາດຕາ 25 ການຈັດພິທີກໍາ ແລະ ປະເພນີ ຕິດພັນກັບສາສະໜາ**

ການຈັດພິທີກໍາ ແລະ ປະເພນີ ຕິດພັນກັບສາສະໜາ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:

1. ກໍລະນີຈັດພິທີກໍາ ແລະ ປະເພນີດັ່ງກ່າວ ຢູ່ໃນຂອບເຂດບ້ານ ຕ້ອງໄດ້ຮັບອະນຸຍາດຈາກນາຍບ້ານ ໂດຍການເຫັນດີຂອງຄະນະກໍາມະການວັດທະນະທໍາ-ສັງຄົມ ຂອງບ້ານ;
2. ກໍລະນີຈັດພິທີກໍາ ແລະ ປະເພນີດັ່ງກ່າວ ຢູ່ບ້ານອື່ນພາຍໃນເມືອງ, ເທດສະບານ, ນະຄອນດຽວກັນ ຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໂດຍການເຫັນດີ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຫ້ອງການພາຍໃນ ໂດຍຜ່ານຫ້ອງການແນວລາວສ້າງຊາດ ຂັ້ນເມືອງ;
3. ກໍລະນີຈັດພິທີກໍາ ແລະ ປະເພນີດັ່ງກ່າວ ຢູ່ເມືອງ, ເທດສະບານ, ນະຄອນອື່ນ ຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໂດຍການເຫັນດີ ຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ພະແນກພາຍໃນ ໂດຍຜ່ານແນວລາວສ້າງຊາດ ຂັ້ນແຂວງ;
4. ກໍລະນີຈັດພິທີກໍາ ແລະ ປະເພນີດັ່ງກ່າວ ຢູ່ແຂວງອື່ນ, ນະຄອນຫຼວງ ຕ້ອງໄດ້ຮັບອະນຸຍາດ ຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ກະຊວງ ພາຍໃນ ໂດຍຜ່ານ ສູນກາງແນວລາວສ້າງຊາດ.

**ມາດຕາ 26 ການພິຈາລະນາອອກອະນຸຍາດ ຈັດພິທີກໍາ**

ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະນຸຍາດຈັດພິທີກໍາແລ້ວ ຂະແໜງການ ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ ຕ້ອງຄົ້ນຄວ້າ ແລະ ພິຈາລະນາອອກອະນຸຍາດ ພາຍໃນເວລາ ເຈັດ ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີ ບໍ່ມີເງື່ອນໄຂ ຫຼື ເອກະສານປະກອບ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ກໍຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນເປັນລາຍລັກອັກສອນ ພາຍໃນເວລາ ເຈັດ ວັນ ເພື່ອໃຫ້ຜູ້ກ່ຽວ ປັບປຸງ ແລະ ແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

## ໝວດທີ 5
### ປະເພດ, ການຈັດ, ການຂໍອະນຸຍາດ ແລະ ພິຈາລະນາ ງານສັງສັນ

**ມາດຕາ 27 ປະເພດງານສັງສັນ**

ງານສັງສັນ ມີ ສອງ ປະເພດ ດັ່ງນີ້:

1. ງານສັງສັນທາງລັດຖະການ;

2. ງານສັງສັນທາງສັງຄົມ.

**ມາດຕາ 28 ງານສັງສັນທາງລັດຖະການ**

ງານສັງສັນທາງລັດຖະການ ຈັດຂຶ້ນເພື່ອສະເຫຼີມສະຫຼອງເນື່ອງໃນໂອກາດວັນສຳຄັນປະຈຳຊາດໃດໜຶ່ງ ເປັນຕົ້ນ ການສະເຫຼີມສະຫຼອງວັນຊາດ, ວັນສ້າງຕັ້ງຂະແໜງການໃດໜຶ່ງ, ງານບຸນປະຫວັດສາດ ແລະ ວັນສຳຄັນອື່ນ.

**ມາດຕາ 29 ງານສັງສັນທາງສັງຄົມ**

ງານສັງສັນທາງສັງຄົມ ຈັດຂຶ້ນເພື່ອສະເຫຼີມສະຫຼອງຊົມເຊີຍຜົນສຳເລັດ, ງານລ້ຽງ ຕ້ອນຮັບ, ອຳລາ, ງານສັງສັນຕິດພັນກັບການຈັດບຸນປະເພນີ, ງານບຸນສິນກິນທານ, ງານແຕ່ງດອງ, ງານຂຶ້ນເຮືອນໃໝ່ ແລະ ອື່ນໆ.

**ມາດຕາ 30 ການຈັດງານສັງສັນ**

ການຈັດງານສັງສັນ ໃຫ້ຄວາມສຳຄັນ ແລະ ມີມາດຕະການ ດັ່ງນີ້:

1. ການຈັດງານສັງສັນ ສະແດງເຖິງການຍ້ອງຍໍສັນລະເສີນ ແລະ ຮູ້ບຸນຄຸນຕໍ່ການນຳພັກ, ລັດ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ໂຄສະນາ ເຜີຍແຜ່ ຄຸນຄ່າທາງປະຫວັດສາດ, ມີລັກສະນະສຶກສາອົບຮົມ ແລະ ສ້າງຈິດສຳນຶກໃຫ້ແກ່ຮຸ່ນສືບທອດໄດ້ສຶກສາຮຽນຮູ້;
2. ການຈັດງານສັງສັນ ສ່ອງແສງເຖິງການສືບທອດມໍຣະດົກອັນລ້ຳຄ່າ, ເສີມຂະຫຍາຍມູນເຊື້ອວັດທະນະທຳ ຮີດຄອງ ປະເພນີອັນດີງາມ, ພູມປັນຍາຂອງບັນພະບູລຸດທີ່ເປັນເອກະລັກ, ສີສັນ ແລະ ຄ່ານິຍົມອັນເປັນລັກສະນະສະເພາະຂອງຊາດ, ຂອງປະຊາຊົນລາວບັນດາເຜົ່າ;
3. ການນຸ່ງຖືໃນງານສັງສັນ ຕ້ອງໃຫ້ສຸພາບຮຽບຮ້ອຍ, ຈົບງາມ, ເໝາະສົມຕາມກາລະເທສະຂອງງານ ແລະ ຮີດຄອງປະເພນີຂອງຊາດ, ຂອງເຜົ່າ;
4. ການຈັດງານສັງສັນ ຕ້ອງຮັບປະກັນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ລຽບງ່າຍ, ກະທັດຮັດ, ປະຢັດ ມັດທະຍັດ ແລະ ສະກັດກັ້ນການຟູມເຟືອຍ, ຫຼຸດຜ່ອນໄລຍະເວລາ ແຕ່ເຕັມໄປດ້ວຍເນື້ອໃນຄວາມໝາຍ ແລະ ຄວາມສຳຄັນຂອງງານ.

**ມາດຕາ 31 ການຂໍອະນຸຍາດຈັດງານສັງສັນ**

**1. ງານສັງສັນທາງລັດຖະການ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຈັດງານສັງສັນທາງລັດຖະການ ຕ້ອງໃຫ້ມີການຮັບຮອງ ແລະ ອະນຸຍາດ ໂດຍມີ ແຈ້ງການ, ຄຳສັ່ງ, ຄຳແນະນຳ ແລະ ໜັງສືອະນຸຍາດ ຈາກລັດຖະບານ, ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການຕ່າງປະເທດ, ຂະແໜງການອື່ນ, ອົງການປົກຄອງ ທ້ອງຖິ່ນ ທີ່ກ່ຽວຂ້ອງ ຈຶ່ງມີການເຕົ້າໂຮມຊຸມນຸມໄດ້.

**2. ງານສັງສັນທາງສັງຄົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຈັດງານສັງສັນທາງສັງຄົມ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຢ່າງໜ້ອຍ ສາມສິບ ວັນ ກ່ອນວັນຈັດງານສັງສັນ.

3. **ການປະກອບຄຳຮ້ອງຂໍອະນຸຍາດຈັດງານສັງສັນທາງສັງຄົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີຈຸດປະສົງຈັດງານສັງສັນທາງສັງຄົມ ຕ້ອງປະກອບຄຳຮ້ອງ ຂໍອະນຸຍາດ ແລະ ເອກະສານ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດຈັດງານສັງສັນ ໂດຍບອກ ຊື່ງານ, ຈຸດປະສົງ, ຄວາມຈຳເປັນ, ຄາດໝາຍ, ເນື້ອໃນປະຫວັດຄວາມເປັນມາຂອງງານ, ເວລາ, ສະຖານທີ່, ຄາດຄະເນຈຳນວນຜູ້ເຂົ້າຮ່ວມ 1 ສະບັບ;
2. ແຜນງານ ແລະ ແຜນການເຄື່ອນໄຫວກິດຈະກຳຂອງງານສັງສັນທາງສັງຄົມ 1 ສະບັບ;
3. ໃບຢັ້ງຢືນທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຈັດງານ 1 ສະບັບ;
4. ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນ (ຖ້າມີ) 1 ສະບັບ;
5. ໃບຢັ້ງຢືນການເສຍອາກອນປະຈຳປີຫຼ້າສຸດ (ຖ້າມີ) 1 ສະບັບ;
6. ຮູບຖ່າຍ 3x4 ຊມ 2 ໃບ;
7. ໃບຢັ້ງຢືນສະຖານທີ່ຈັດງານສັງສັນ 1 ສະບັບ;
8. ແຜນການຮັກສາຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ 1 ສະບັບ;
9. ແຜນການປົກປັກຮັກສາສິ່ງແວດລ້ອມ ແລະ ສຸຂານາໄມ 1 ສະບັບ.

**ມາດຕາ 32 ການພິຈາລະນາອອກອະນຸຍາດ ຈັດງານສັງສັນທາງສັງຄົມ**

ພາຍຫຼັງຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບແລ້ວ ຕ້ອງປະເມີນ, ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານໂດຍທັນທີ, ດຳເນີນການຄົ້ນຄວ້າ ແລະ ພິຈາລະນາອອກອະນຸຍາດຈັດງານສັງສັນທາງສັງຄົມ ໃຫ້ພາກສ່ວນທີ່ສະເໜີ ຕາມຂັ້ນຕອນ ພາຍໃນເວລາ ເຈັດ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ. ໃນກໍລະນີ ເອກະສານບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງດຳລັດສະບັບນີ້ ກໍຕ້ອງແຈ້ງໃຫ້ພາກສ່ວນທີ່ສະເໜີເປັນລາຍລັກອັກສອນ ເພື່ອປັບປຸງ ແລະ ປະກອບເພີ່ມຕື່ມ. ພາກສ່ວນທີ່ສະເໜີ ຕ້ອງໄດ້ປັບປຸງ ແລະ ປະກອບເອກະສານເພີ່ມຕື່ມ ຕາມທີ່ໄດ້ກຳນົດໄວ້. ໃນກໍລະນີບໍ່ເຫັນດີ ໃຫ້ອະນຸຍາດຈັດງານສັງສັນທາງສັງຄົມ ກໍຕ້ອງມີການຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຊັດເຈນ.

ງານສັງສັນທາງສັງຄົມ ສາມາດຈັດຂຶ້ນໄດ້ພາຍຫຼັງໄດ້ຮັບການອະນຸຍາດ ຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 33 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີ ພຶດຕິກຳ ດັ່ງນີ້:

1. ສວຍໂອກາດຈັດ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ເພື່ອຫາລາຍໄດ້ຜົນປະໂຫຍດສ່ວນບຸກຄົນ, ກຸ່ມຄົນ ທີ່ມີລັກສະນະຮູບການທຸລະກິດ ແລະ ຫວັງຜົນກຳໄລຢ່າງເດັດຂາດ;
2. ນຳເອົາພຣະພຸດທະຮູບ, ກອງຜ້າປ່າສາມັກຄີ, ຄ້ອງ, ກອງຫຼວງ, ຍອດຊໍ່ຟ້າ ແລະ ວັດຖຸທານຕ່າງໆ ໃສ່ພາຫະນະແຫ່ໄປຕາມທ້ອງຖະໜົນ ເພື່ອໂຄສະນາ ແຜ່ປັດໄຈ ໄທຍະທານຢ່າງເດັດຂາດ;

3. ຕັ້ງວົງດົນຕີ, ປະກອບໄຟແສງ ສີ ສຽງ, ເປີດສຽງເພງດັງ, ເປີດເພງສາກົນ, ສຽງຂັບລຳທີ່ມີເນື້ອໃນລາມົກອານາຈານ, ສຽດສີ, ເຢາະເຢີ້ຍສັງຄົມ, ເຕັ້ນລຳ, ຂາຍ ແລະ ດື່ມເຄື່ອງທີ່ມີທາດເຫຼົ້າ, ລະຫຼິ້ນຮູບແບບການພະນັນໃນບຸນປະເພນີ ໂດຍບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ;
4. ຫຼິ້ນກິນຟຸມເຟືອຍ ແລະ ແກ່ຍາວເວລາເກີນກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດ;
5. ເຊື່ອຖືງົມງວາຍ, ລັກສະນະຝືນວິທະຍາສາດ ໂດຍການທໍລະມານ, ທາລຸນສັດ ໃນບຸນປະເພນີ, ພິທີກຳຂອງຊົນເຜົ່າໃດໜຶ່ງ;
6. ກະທຳເຫດການໃດໜຶ່ງ, ທີ່ໄຮ້ມະນຸດສະທຳ, ສາບານ, ເຊື່ອຖືປະເພນີ ແລະ ພິທີກຳແບບຜິດໆ ແລະ ບໍ່ສອດຄ່ອງກັບມູນເຊື້ອວັດທະນະທຳ ທີ່ຂັດກັບກົດໝາຍ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 34 ຂໍ້ຫ້າມສຳລັບບຸນປະເພນີ**

ຫ້າມມີພຶດຕິກຳ ຈັດບຸນປະເພນີ ດັ່ງນີ້:

1. ເສບ, ງັນ, ເຕັ້ນຟ້ອນ, ເປີດເພງຕ່າງປະເທດ, ມີວົງດົນຕີ ແລະ ຂາຍເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ຕາມວັດວາອາຮາມ ແລະ ງານບຸນ;
2. ສະແດງສິ່ງລາມົກອະນາຈານ, ນຸ່ງເຄື່ອງບໍ່ສຸພາບ, ເຄື່ອງເປືອຍກາຍ ໃນເວລາເຂົ້າຮ່ວມກິດຈະກຳຕ່າງໆໃນງານບຸນ ແລະ ມີການກະທຳທີ່ບໍ່ສອດຄ່ອງກັບຮີດຄອງປະເພນີ ແລະ ກົດໝາຍ;
3. ຈັດພິທີການສະເຫຼີມສະຫຼອງ ມ່ວນຊື່ນແບບໃຫຍ່ໂຕມະໂຫຖານ ຊຶ່ງເປັນການຟຸມເຟືອຍຊັບສິນ;
4. ສວຍໂອກາດຂຶ້ນລາຄາເຄື່ອງອຸປະໂພກ, ບໍລິໂພກ, ຄ່າໂດຍສານສາທາລະນະ, ລາຄາສິນຄ້າໃນໄລຍະບຸນປະເພນີ;
5. ສວຍໃຊ້ໂອກາດຍາມບຸນປະເພນີ ເຕົ້າໂຮມຄົນຈຳນວນຫຼາຍໂດຍມີເປົ້າໝາຍທາງການເມືອງ ທີ່ຂັດຕໍ່ແນວທາງ ນະໂຍບາຍ, ມົ້ວສຸມຫຼິ້ນການພະນັນ, ຄ້າຂາຍຢາເສບຕິດ ແລະ ຄ້າປະເວນີ;
6. ຂາຍປີ້ ຫຼື ເກັບເງິນເພື່ອເຂົ້າຮ່ວມງານບຸນ, ເປີດເຄື່ອງສຽງດັງເນືອງນັນເກີນຂອບເຂດທີ່ກຳນົດໄວ້;
7. ຜະລິດ, ນຳເຂົ້າ, ຂົນສົ່ງ, ຈຳໜ່າຍ, ຊື້ຂາຍ, ຈູດ ແລະ ດັດແປງອຸປະກອນປະກອບກິດຈະກຳໃນງານບຸນເປັນຕົ້ນ ວັດຖຸອັນຕະລາຍ,ບັ້ງໄຟດອກ, ບັ້ງກະໂພກ, ທາດແຕກ, ທາດລະເບີດ, ອາວຸດເສິກ,ທາດເບື່ອ, ເຄມີ ອັນກໍ່ໃຫ້ເກີດຜົນກະທົບຕໍ່ຊັບສິນ ແລະ ຊີວິດຮ່າງກາຍຂອງບຸກຄົນອື່ນ;
8. ຜິດຖຽງກັນ, ອາລະວາດ, ຕີກັນ ແລະ ອື່ນໆ ອັນກໍ່ໃຫ້ເກີດຄວາມບໍ່ສະຫງົບປອດໄພ;
9. ນຳໃຊ້ຄຳເວົ້າ, ບົດກາບກອນ, ຄຳຜະຫຍາ, ຄຳເຊີ້ຕ່າງໆທີ່ມີລັກສະນະເຢາະເຢີ້ຍ, ສຽດສີ, ດູຖູກ, ໝິ່ນປະໝາດ, ແບ່ງແຍກຊົນຊາດ, ຊົນເຜົ່າ ໃນງານບຸນຢ່າງເດັດຂາດ;
10. ວາງສະແດງ ແລະ ຂາຍຜະລິດຕະພັນວັດທະນະທຳທີ່ຮຽນແບບ,ສຳເນົາຈາກຕ່າງປະເທດ, ສິນຄ້າປອມ, ສິນຄ້າທີ່ບໍ່ມີຄຸນນະພາບ ໂດຍບໍ່ຮູ້ແຫຼ່ງກຳເນີດ ແລະ ບໍ່ເປັນເອກະລັກສະເພາະຂອງລາວ ມາວາງຈຳໜ່າຍໃນງານບຸນ;
11. ຈຳໜ່າຍລາຄາສິນຄ້າຜະລິດຕະພັນຕ່າງໆເປັນເງິນຕາຕ່າງປະເທດ ລວມທັງ ຈຳໜ່າຍອາຫານທີ່ບໍ່ຮັບປະກັນດ້ານສຸຂານາໄມ ແລະ ບໍ່ປອດໄພ;
12. ວາງສະແດງ ແລະ ຂາຍສັດປ່າຫວງຫ້າມ ຫຼື ໃກ້ຈະສູນພັນ;
13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 35 ຂໍ້ຫ້າມສຳລັບພິທີກຳ**

ຫ້າມມີພຶດຕິກຳ ຈັດພິທີກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ດູຖູກ ຫຼື ຂັດກັບຮີດຄອງ ປະເພນີ ໂດຍຮັກສາຄວາມເປັນມະນຸດສະທຳຂອງ ປະຊາຊົນ;
2. ແຈ້ງຂ່າວຢ່າງກວ້າງຂວາງເກີນຄວາມຈຳເປັນ ຊຶ່ງກາຍເປັນການສວຍໂອກາດ ແລະ ສ້າງຄວາມເສື່ອມ ເສຍແກ່ຄຸນຄ່າ ແລະ ທາດແທ້ຂອງການຈັດພິທີກຳທາງສາສະໜາ;
3. ຈັດງານພິທີກຳ ມີລັກສະນະຟູມເຟືອຍເກີນຄວາມຈຳເປັນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 36 ຂໍ້ຫ້າມສຳລັບງານສັງສັນ**

ຫ້າມມີພຶດຕິກຳ ຈັດງານສັງສັນ ດັ່ງນີ້:

1. ນຳໃຊ້ງົບປະມານຂອງລັດ ເພື່ອຈັດຊື້ເຄື່ອງດື່ມທີ່ມີລາຄາແພງ ສຳລັບງານລ້ຽງ ແລະ ງານຕ້ອນຮັບແຂກ;
2. ຈັດພິທີການສະເຫຼີມສະຫຼອງ ມ່ວນຊື່ນແບບໃຫຍ່ໂຕມະໂຫຖານ ທີ່ເປັນການຟຸມເຟືອຍຊັບສິນ;
3. ເສບດົນຕີ, ເປີດເພງເປີດເຄື່ອງສຽງດັງເນືອງນັນເກີນຂອບເຂດທີ່ກຳນົດໄວ້;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 37 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດອຳນາດໜ້າທີ່ຕຳແໜ່ງ, ເພື່ອຂົ່ມຂູ່ເອົາຜົນປະໂຫຍດທາງກົງ ແລະ ທາງອ້ອມກົດ ໜ່ວງຖ່ວງ ດຶງ, ແກ່ຍາວເວລາ, ລະເວັ້ນ ຫຼື ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັບຍາບັນທີ່ກໍ່ ໃຫ້ເກີດຄວາມ ເສຍຫາຍຕໍ່ລັດ, ຕໍ່ບຸກຄົນ ຫຼື ການຈັດຕັ້ງ;
2. ສົມຮູ້ຮ່ວມຄິດກັບຜູ້ຈັດຕັ້ງປະຕິບັດ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດຕິພີ່ນ້ອງ, ໝູ່ ເພື່ອນ ຫຼື ພັກພວກ ກໍ່ໃຫ້ເກີດຜົນເສຍຫາຍທາງກົງ ແລະ ທາງອ້ອມ ຕໍ່ພາບພົດຊື່ສຽງ, ຊັບສິນຂອງລັດ ແລະ ອື່ນໆ;
3. ນຳໃຊ້ສະຖານທີ່ຈັດງານບຸນປະເພນີ, ພິທີກຳ ແລະ ງານສັງສັນ ເປັນບ່ອນຄ້າຂາຍ, ຈຳໜ່າຍ, ເກັບກັກ, ເກັບມ້ຽນ, ການມົ້ວສຸມສິ່ງເສບຕິດ, ໂສເພນີ, ຄ້າມະນຸດ, ອາວຸດ, ຂອງເຖື່ອນ ແລະ ສິ່ງຜິດກົດໝາຍ ທຸກຊະນິດ;
4. ເປີດເຜີຍຄວາມລັບ, ປອມແປງເອກະສານ, ທຳລາຍຂໍ້ມູນຫຼັກຖານຂອງລັດຖະການ, ປິດບັງ ເຊື່ອງ ອຳ ລາຍຮັບ, ຮັບສິນບົນ ທີ່ຕິດພັນກັບວຽກງານບຸນປະເພນີ, ພິທີກຳ ແລະ ງານສັງສັນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ

**ມາດຕາ 38 ອົງການຄຸ້ມຄອງ ແລະ ກວດກາ**

ລັດຖະບານ ຄຸ້ມຄອງ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າ

ການໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ເປັນໃຈກາງປະສານສົມທົບກັບແນວລາວສ້າງຊາດ, ຂະແໜງການພາຍໃນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ມີດັ່ງນີ້:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ;
4. ອົງການປົກຄອງບ້ານ.

**ມາດຕາ 39 ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໃນທົ່ວປະເທດ;
2. ຜັນຂະຫຍາຍນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
3. ສ້າງແຜນການ, ແຜນງານ, ໂຄງການ ອະນຸລັກຮັກສາ ສົ່ງເສີມ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໃນທົ່ວປະເທດ;
4. ໂຄສະນາ ເຜີຍແຜ່, ສຶກສາອົບຮົມນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບບຸນປະເພນີ, ພິທີກຳ ແລະ ງານສັງສັນ;
5. ຊີ້ນຳ, ຕິດຕາມ, ກວດກາ ແລະ ຄຸ້ມຄອງການເຄື່ອນໄຫວວຽກງານ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານ ສັງສັນ;
6. ເກັບກຳຂໍ້ມູນສະຖິຕິ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໃນທົ່ວປະເທດ;
7. ສະກັດກັ້ນ, ຍົກເລີກ, ປັບໄໝ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບບຸນປະເພນີ, ພິທີກຳ ແລະ ງານສັງສັນ;
8. ພົວພັນ ເຂົ້າຮ່ວມ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ສາກົນ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ລະບຽບການ ເປັນແຜນການ, ແຜນງານ, ໂຄງການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ແລະ ຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
3. ຕິດຕາມ, ກວດກາ ການເຄື່ອນໄຫວ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໃຫ້ມີຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ;
4. ພົວພັນ ເຂົ້າຮ່ວມ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ຕາມການມອບໝາຍ;
5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຕໍ່ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບບຸນປະເພນີ, ພິທີກຳ ແລະ ງານສັງສັນ;
2. ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
3. ຕິດຕາມ, ກວດກາ ການເຄື່ອນໄຫວ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໃຫ້ມີຄວາມຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ;
4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຕໍ່ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ສິດ ແລະ ໜ້າທີ່ຂອງແນວລາວສ້າງຊາດ**

ໃນການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ທັງຢູ່ ພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມບຸນປະເພນີ, ພິທີກຳ ແລະ ງານສັງສັນ ທີ່ສຳຄັນ;
2. ສະເໜີ ສ້າງຮ່າງ ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;

3. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ ພະນັກງານ-ລັດຖະກອນ ເສີມຂະຫຍາຍສິດເປັນເຈົ້າ ໃນການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
4. ເກັບກຳ ຄຳຄິດຄຳເຫັນ, ຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ເພື່ອສະເໜີຕໍ່ຂັ້ນເທິງ;
5. ປະກອບສ່ວນ ປົກປັກຮັກສາ, ເສີມຂະຫຍາຍ ມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
6. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອອັນດີງາມ ຂອງແນວລາວສ້າງຊາດ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໃຫ້ແກ່ຄົນຮຸ່ນຫຼັງ ຮັບຮູ້ ແລະ ເຂົ້າໃຈ;
7. ພົວພັນ ຮ່ວມມື ກັບບັນດາປະເທດເພື່ອນມິດຍຸດທະສາດ, ພາກພື້ນ ແລະ ສາກົນ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ສິດ ແລະ ໜ້າທີ່ຂອງຂະແໜງການພາຍໃນ**

ໃນການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຂະແໜງການພາຍໃນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມ ພະນັກງານ-ລັດຖະກອນ ເຂົ້າຮ່ວມ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ທີ່ສຳຄັນ;
2. ເປັນຕົວແທນສ່ອງແສງຄວາມຄິດເຫັນ, ຄວາມມຸ່ງມາດປາຖະໜາ ແລະ ການສະເໜີຂອງ ປະຊາຊົນລາວບັນດາເຜົ່າ, ຊາວຕ່າງດ້າວ, ຊາວຕ່າງປະເທດ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ເພື່ອສະເໜີຕໍ່ຂັ້ນເທິງ;
3. ເຂົ້າຮ່ວມ ປະກອບສ່ວນ ໃນການສ້າງນະໂຍບາຍ ແລະ ນິຕິກຳຕ່າງໆ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
4. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
5. ປະສານສົມທົບ ກັບອົງການປົກຄອງ ຂັ້ນຂອງຕົນ ໃນການປຶກສາຫາລື, ໄກ່ເກ່ຍຂໍ້ຂັດແຍ່ງ ກ່ຽວກັບບຸນປະເພນີ, ພິທີກຳ ແລະ ງານສັງສັນ;
6. ເຂົ້າຮ່ວມ ແລະ ປະຕິບັດ ກິດຈະກຳ ແລະ ງານບຸນສິນກິນທານທາງສາສະໜາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງ ແລະ ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ໃຫ້ການຮ່ວມມື, ອຳນວຍຄວາມສະດວກ ໃນການປະສານງານ ແກ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຕິດຕາມ, ກວດກາ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ເພື່ອໃຫ້

ງານດັ່ງກ່າວ ມີຄວາມສະຫງົບສຸກ ປອດໄພ, ມີປະສິດທິພາບ, ປະສິດທິຜົນ ແລະ ເກີດປະໂຫຍດສູງສຸດ;

2. ເຊື່ອມຊຶມ ແລະ ເຜີຍແຜ່ ດຳລັດສະບັບນີ້ ພ້ອມທັງເຂົ້າຮ່ວມຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງ;
3. ໃຫ້ການຮ່ວມມືທີ່ດີ ກັບຂະແໜງການ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ຂັ້ນຂອງຕົນ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ໃນການອຳນວຍຄວາມສະດວກ ການຈັດຕັ້ງປະຕິບັດ ບຸນປະເພນີ, ພິທີກຳ ແລະ ງານສັງສັນ;
4. ເປັນເຈົ້າການໃນການຮັກສາຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ຢູ່ງານບຸນດັ່ງກ່າວ;
5. ສະໜອງຂໍ້ມູນ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວ ວຽກງານຂອງຕົນ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນຂອງຕົນ ຢ່າງເປັນປົກກະຕິ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານ ຕໍ່ຂັ້ນເທິງຂອງຕົນ ແລະ ມີວິທີການແກ້ໄຂຢ່າງ ທັນການ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 ເນື້ອໃນການກວດກາ**

ການດຳເນີນ ແລະ ການເຄື່ອນໄຫວ ວຽກງານ ກ່ຽວກັບ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ໄດ້ຮັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ຈາກອົງການຄຸ້ມຄອງ ແລະ ກວດກາ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 39 ຂອງດຳລັດສະບັບນີ້.

ເນື້ອໃນການກວດກາ ມີ ດັ່ງນີ້ :

1. ການປະຕິບັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ດຳລັດສະບັບນີ້;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການເຄົາລົບ ນັບຖື ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ຂອງຊາວຕ່າງດ້າວ, ຊາວຕ່າງປະເທດ;
4. ລັກສະນະຂອງການຈັດ ບຸນປະເພນີ, ພິທີກຳ ແລະ ງານສັງສັນ.

ອົງການຄຸ້ມຄອງ ແລະ ກວດກາ ສາມາດສະເໜີມາດຕະການແກ້ໄຂ ຕໍ່ຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາໃນກໍລະນີພົບເຫັນການລະເມີດກົດໝາຍ, ລະບຽບການ ທີ່ກ່ຽວຂ້ອງ ແລະ ດຳລັດສະບັບນີ້.

**ມາດຕາ 46 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

## ໝວດທີ 8
### ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງ ປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ການພັດທະນາ ແລະ ການຈັດ ບຸນປະເພນີ, ພິທີກຳ ແລະ ງານສັງສັນ ຢ່າງຖືກຕ້ອງ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 9
### ບົດບັນຍັດສຸດທ້າຍ

**ມາດຕາ 49 ການຈັດຕັ້ງປະຕິບັດ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບ ກັບບັນດາ ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 50 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**